PA

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ສຳນັກງານ ຄຄຊ
ເລກທີ 0323
ວັນທີ 22 MAR 2018
ໂທລະສັບ 021 217770

ເລກທີ: 14 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 16 ມີນາ 2018

# ບົດບັນທຶກກອງປະຊຸມ

## ສ່ອງແສງວຽກງານສາຍລັດ ປະຈຳເດືອນ ກຸມພາ ປີ 2018

ໃນຕອນເຊົ້າຂອງວັນທີ 07 ມີນາ 2018 ເວລາ 08:30 ໂມງ ຢູ່ທີ່ຫ້ອງປະຊຸມໃຫຍ່ຊັ້ນ IV, ທະນາຄານແຫ່ງ ສປປ ລາວ ໄດ້ຈັດກອງປະຊຸມສ່ອງແສງສາຍລັດ ປະຈຳເດືອນ ກຸມພາ 2018 ພາຍໃຕ້ການເປັນປະທານຂອງ ທ່ານ ສົມພາວ ໄຟສິດ ຜູ້ວ່າການ ທຫລ ໂດຍມີບັນດາຄະນະກົມ ແລະ ຄະນະອຳນວຍການທະນາຄານທຸລະກິດລັດເຂົ້າຮ່ວມ (ດັ່ງລາຍຊື່ຄັດຕິດມາພ້ອມນີ້). ກອງປະຊຸມໄດ້ຮັບຟັງການລາຍງານຜົນການຈັດຕັ້ງປະຕິບັດວຽກງານຂອງບັນດາກົມ-ທຽບເທົ່າກົມພາຍໃນ ທຫລ ແລະ ທະນາຄານທຸລະກິດລັດ ໃນໄລຍະ 1 ເດືອນຜ່ານມາ ແລະ ການວາງທິດທາງແຜນການໃນຕໍ່ໜ້າ ເຊິ່ງສາມາດສັງລວມສະພາບພົ້ນເດັ່ນດັ່ງນີ້:

### I. ການລາຍງານສະພາບພົ້ນເດັ່ນຂອງບັນດາກົມ ແລະ ທຽບເທົ່າກົມ ແລະ ທະນາຄານທຸລະກິດລັດ

ດ້ານການຄຸ້ມຄອງມະຫາພາກ ແມ່ນສາມາດຮັກສາສະຖຽນລະພາບເງິນຕາແຫ່ງຊາດໄວ້ໄດ້ຢ່າງໝັ້ນທ່ຽງ. ວຽກງານຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ ແມ່ນມີຫຼາຍວຽກທີ່ໄດ້ຈັດຕັ້ງປະຕິບັດສຳເລັດຕາມພາລະບົດບາດຂອງຕົນ. ສຳເລັດພື້ນຖານໃນການຄົ້ນຄວ້າກ່ຽວກັບສະຖານະພາບ ແລະ ການຂຶ້ນທະບຽນຂອງວິສາຫະກິດຂອງກອງທຶນປົກປ້ອງຜູ້ຝາກເງິນ. ສຳເລັດການອອກຈຳໜ່າຍຮຸ້ນ ຂອງບໍລິສັດຊີມັງລາວ ແລະ ສຳເລັດການການເຊື່ອມຕໍ່ລະບົບ ລະຫວ່າງຕະຫຼາດຫຼັກຊັບລາວ ກັບບໍລິສັດດູແລຊັບສິນ. ເປັນເຈົ້າການຕິດຕາມສະພາບກ່ຽວກັບກະຊວງການຄັງ ຂອງສະຫະລັດອາເມລິກາ ກຳນົດລາຍຊື່ນັກທຸລະກິດ ແລະ ນິຕິບຸກຄົນ ທີ່ດຳເນີນທຸລະກິດຄາຊິໂນ ໃນ ສປປ ລາວ ເຂົ້າໃນບັນຊີ. ສຳເລັດການເປີດໂຕຜະລິດຕະພັນໃໝ່ ແລະ ການພັດທະນາລະບົບຊຳລະອາກອນ ຂອງທະນາຄານການຄ້າຕ່າງປະເທດລາວມະຫາຊົນ.

### II. ທິດຊີ້ນຳຂອງປະທານກອງປະຊຸມ

1. ທະນາຄານທຸລະກິດ ໃຫ້ເອົາໃຈໃສ່ຕິດຕາມສະພາບການຄຸ້ມຄອງບໍລິຫານທະນາຄານຢ່າງໃກ້ຊິດ; ເອົາໃຈໃສ່ເກັບກູ້ໜີ້ເສຍ ແລະ ໜີ້ປົກກະຕິໃຫ້ໄດ້ຕາມແຜນການ; ການອອກຜະລິດຕະພັນໃໝ່ໆນັ້ນ ແມ່ນຄວນມີລະບຽບຄຸ້ມຄອງທີ່ຮັດກຸມ.

2. ສະພາບບັນຫາເງິນປອມ ເຊິ່ງຍັງປະກົດເຫັນຢູ່ໃນສັງຄົມນັ້ນ ເຊັ່ນ: ເງິນກີບ ແລະ ເງິນຕາຕ່າງປະເທດ ແມ່ນມອບໃຫ້ຫ້ອງການເປັນເຈົ້າການໃນການປະສານງານ ເພື່ອຈັດກອງປະຊຸມຮ່ວມ ລະຫວ່າງ ກົມ

ເງິນຕາ ແລະ ສຳນັກງານຂໍ້ມູນຕ້ານການຟອກເງິນ ເພື່ອຄົ້ນຄວ້າ ແລະ ແບ່ງຄວາມຮັບຜິດຊອບຕາມພາລະບົດບາດຂອງກົມກ່ຽວຂ້ອງໃນການຕິດຕາມສະພາບດັ່ງກ່າວ.

3. ສຳລັບການສະເໜີຂອງໂຮງພິມ ເພື່ອຂໍນຳໃຊ້ເຈ້ຍພິມເງິນທີ່ຄ້າງແຕ່ປີ 2007 ມານຳໃຊ້ສຳລັບພິມແຊັກ ແລະ ປິດສະເຕີ້ ແລະ ຂໍຊື້ເຄື່ອງຈັກພິມໃໝ່ ເພື່ອນຳໃຊ້ພິມແຊັກ ແລະ ປິດສະເຕີ້ ເພື່ອສ້າງລາຍຮັບແມ່ນມອບໃຫ້ໂຮງພິມທະນະບັດນຳໄປຄົ້ນຄວ້າ ແລະ ຂຶ້ນແຜນລະອຽດ ໂດຍມີການວິເຄາະຢ່າງຈະແຈ້ງເຊັ່ນ: ຈຸດປະສົງ ແລະ ລະດັບຄາດໝາຍ ແລະ ໄດ້ຖືກກຳນົດໄວ້ໃນແຜນແລ້ວບໍ່.

4. ວຽກງານທະນາຄານສົ່ງເສີມກະສິກຳ:ໃນການເປັນເຈົ້າພາບຈັດກອງປະຊຸມອາປາກາ (APRACA) ເຊິ່ງຕາມຮອບໝູນວຽນ ແມ່ນຈະໄດ້ຈັດຂຶ້ນໃນເດືອນ ເມສາ 2018 ຢູ່ ສປປ ລາວ ນັ້ນ ເຫັນວ່າການກະກຽມຄວາມພ້ອມດ້ານຕ່າງໆ ແມ່ນອາດຈະບໍ່ທັນຕາມກຳນົດເວລາ. ສະນັ້ນ, ໃນຕໍ່ໜ້າໃຫ້ທະນາຄານສົ່ງເສີມກະສິກຳ ຕ້ອງລາຍງານໃຫ້ ທຫລ ຮັບຊາບລ່ວງໜ້າໄວກວ່ານີ້ ແລະ ໃຫ້ທະນາຄານສົ່ງເສີມກະສິກຳປະສານກັບກົມພົວພັນສາກົນ ເພື່ອແຈ້ງຕອບເປັນເຈົ້າພາບຈັດກອງປະຊຸມໃນປີຕໍ່ໄປ. ພ້ອມນີ້, ຜູ້ເຂົ້າຮ່ວມກອງປະຊຸມປະຈຳປີດັ່ງກ່າວແຕ່ລະຄັ້ງ ໃຫ້ເປັນເຈົ້າການໃນການຕິດຕາມເນື້ອໃນຂອງກອງປະຊຸມທີ່ຕິດພັນກັບທະນາຄານຂອງຕົນຕື່ມ ເພື່ອບໍ່ໃຫ້ຕົກທ່າຮັບ.

5. ວຽກງານທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ: (1) ການສະເໜີຄົ້ນຄວ້າປະທານສະພາບໍລິຫານຂອງທະນາຄານດັ່ງກ່າວ ແມ່ນໃຫ້ກົມຈັດຕັ້ງແລະພະນັກງານ ສົມທົບກັບກະຊວງການເງິນ ໃຫ້ແກ້ໄຂໂດຍໄວ ເພື່ອເປັນການຈັດຕັ້ງປະຕິບັດຖືກຕາມລະບຽບ ແມ່ນຕ້ອງໄດ້ຈັດກອງປະຊຸມຂາຮຸ້ນ ໃຫ້ທັນຕາມກຳນົດເວລາ ແລະ ຖ້າເປັນປະທານສະພາບໍລິຫານສະພາຊຸດເກົ່າສາມາດຈັດຕັ້ງກອງປະຊຸມໄດ້ບໍ່. (2) ການສະໜີຈົດທະບຽນຂອງສະມາຄົມທະນາຄານໃຫ້ຖືກຕາມລະບຽບກົດໝາຍ ແລະ ການແຕ່ງຕັ້ງປະທານສະມາຄົມທະນາຄານ ແມ່ນໃຫ້ສະມາຄົມທະນາຄານ ສົມທົບກັບກົມຈັດຕັ້ງແລະພະນັກງານ ເພື່ອສະເໜີຫາກະຊວງພາຍໃນ ກ່ຽວກັບການຄົ້ນຄວ້າສິດ ແລະ ຂອບເຂດຂອງການເຄື່ອນໄຫວ ພາຍໃຕ້ດຳລັດຂອງກະຊວງພາຍໃນ ໂດຍບໍ່ໃຫ້ມີພາລະບົດບາດຂອງ ທຫລ. (3) ສຳລັບການເປັນປະທານກອງປະຊຸມສະມາຄົມທະນາຄານອາຊຽນ ແມ່ນເຫັນຄວນໃຫ້ຮັບ ຫາກຖືກຮອບໝູນວຽນ ແລະ ໃຫ້ມີການປຶກສາຫາລືກັນພາຍໃນສະມາຄົມກັນຢ່າງຄັກແນ່.

6. ໃຫ້ກົມຄຸ້ມຄອງທະນາຄານທຸລະກິດ ຄົ້ນຄວ້າຂໍ້ສະເໜີຂອງທະນາຄານການຄ້າຕ່າງປະເທດລາວມະຫາຊົນ ກ່ຽວກັບການພິຈາລະນາຄົ້ນຄວ້າລະບຽບການສ້າງຕັ້ງສາຂາໃໝ່ ຂອງທະນາຄານທຸລະກິດ ແລະທະນາຄານເອກະຊົນ ຊຶ່ງອາດມີຄວາມແຕກຕ່າງກັນ. ໃນນັ້ນ, ຍັງມີບາງຂໍ້ຂອງລະບຽບທີ່ເຫັນວ່າທະນາຄານທຸລະກິດຍັງພົບຄວາມຫຍຸ້ງຍາກໃນການປະຕິບັດ ໂດຍສະເພາະ ທຄຕລ ທີ່ຄຸ້ມຄອງບັນດາສາຂາແບບລວມສູນ ຊຶ່ງລະບຽບຂອງ ທຫລ ຮຽກຮ້ອງໃຫ້ມີການສ້າງລະບຽບເປັນອັນສະເພາະຂອງສາຂາ.

7. ດ້ານການພັດທະນາຫຼັກສູດຢູ່ສະຖາບັນການທະນາຄານ ແມ່ນໃຫ້ປະຕິບັດຕາມກະຊວງສຶກສາທິການ ແລະ ກິລາ ແລະ ທຸກວຽກງານແມ່ນໃຫ້ຜ່ານສະພາບໍລິຫານສະຖາບັນການທະນາຄານ. ພ້ອມນີ້, ໃຫ້ສະຖາບັນການທະນາຄານ ເນັ້ນຄຸນນະພາບ ຫຼາຍກວ່າປະລິມານ. ສ່ວນການປະຕິບັດນະໂຍບາຍ ແມ່ນໃຫ້ຢູ່ໃນອັດຕາສ່ວນທີ່ໜ້ອຍ ພຽງ 5% ແລະ ຢາກໃຫ້ມີຫຼັກສູດຍົກລະດັບສຳລັບພະນັກງານ ໂດຍສົມທົບກັບໄທ ແລະ ສສ ຫວຽດນາມ.

III. ວຽກຈຸດສຸມໃນເດືອນ ມີນາ 2018

1. ໃຫ້ບັນດາກົມ ແລະ ທຽບເທົ່າກົມ ສືບຕໍ່ຈັດຕັ້ງປະຕິບັດໃຫ້ສຳເລັດຕາມແຜນທີ່ຂຶ້ນໄວ້.

2. ກົມນະໂຍບາຍເງິນຕາ ໃຫ້ສືບຕໍ່ເອົາໃຈໃສ່ຕິດຕາມສະຖຽນລະພາບທາງດ້ານເງິນຕາຢ່າງໃກ້ຊິດ ແລະ ສືບຕໍ່ຄົ້ນຄວ້າດ້ານຄວາມສ່ຽງ ທີ່ອາດຈະເກີດຂຶ້ນຕໍ່ອັດຕາເງິນເຟີ້ໃຫ້ສຳເລັດຕາມແຜນ.

3. ວຽກງານຄຸ້ມຄອງສະຖາບັນການເງິນ ໃຫ້ເປັນເຈົ້າການແຕ່ລະດ້ານຕື່ມ ເຊັ່ນ: (1) ການໂຈະຊື່ວຄາວ ກ່ຽວກັບການຂໍສະເໜີສ້າງຕັ້ງສະຖາບັນການເງິນ ເພື່ອຕິດຕາມ ກວດກາ ແລະ ປັບປຸງນິຕິກຳໃຫ້ຄົບຖ້ວນ ເພື່ອມີນະໂຍບາຍອອກມາປີ 2019. (2) ຕິດຕາມຢ່າງໃກ້ຊິດ ແລະ ມີການລາຍງານຢ່າງຈະແຈ້ງ ຕໍ່ກັບສະພາບການຕ່າງໆ ທີ່ເກີດຂຶ້ນກັບສະຖາບັນການເງິນ ທີ່ຂຶ້ນກັບ ທຫລ ແລະ ບໍ່ຂຶ້ນກັບ ທຫລ.

4. ວຽກງານຄຸ້ມຄອງທະນາຄານທຸລະກິດ: ໃຫ້ເອົາໃຈໃສ່ສືບຕໍ່ຄົ້ນຄວ້າວຽກງານບາເຊວ 2 ໃຫ້ສຳເລັດຕາມແຜນການ.

5. ວຽກງານທະນາຄານທຸລະກິດ: (1) ໃຫ້ທະນາຄານທຸລະກິດສືບຕໍ່ເກັບກູ້ໜີ້ສິນ ແລະ ເອົາໃຈໃສ່ຂະບວນການແກ້ໄຂໜີ້ 3 ແຈ; (2) ຕິດຕາມ ແລະ ຄຸ້ມຄອງສາຂາຂອງຕົນທຸກສາຂາຢ່າງໃກ້ສິດ ເພື່ອບໍ່ໃຫ້ເກີດມີບັນຫາຢ່າງແທ້ຈິງ ເຊັ່ນ: ວຽກງານສິນເຊື່ອ, ການເກັບກູ້ໜີ້ສິນໃຫ້ໄດ້ຕາມແຜນ, ການປ່ອຍສິນເຊື່ອແຕ່ລະຄັ້ງຕ້ອງປະເມີນຫຼັກຊັບຄໍ້າປະກັນໃຫ້ຖືກຕ້ອງ, ຕິດຕາມພະນັກງານສິນເຊື່ອໃຫ້ມີຄວາມຊື່ສັດຢ່າງແທ້ຈິງ ເພື່ອຄວາມຖືກຕ້ອງ; (3) ສະເໜີໃຫ້ທະນາຄານທຸລະກິດລັດ ຄົ້ນຄວ້າລັກສະນະສະເພາະການໃຫ້ສິນເຊື່ອເພື່ອສົ່ງເສີມທຸລະກິດຂະໜາດກາງ ແລະ ນ້ອຍ ເນື່ອງຈາກປະຈຸບັນຍັງເປັນຂະບວນການລວມເພື່ອສ້າງເງື່ອນໄຂໃຫ້ລູກຄ້າເຂົ້າຫາທະນາຄານຕົນສະດວກຂຶ້ນ. (4) ໃຫ້ທຸກໆທະນາຄານຕີຖອຍປະກົດການຫຍໍ້ທໍ້ ຄືໄລຍະຜ່ານມາ ແລະ ຫາກເກີດສະພາບການບໍ່ດີ ແມ່ນໃຫ້ລົງເກັບກຳເນື້ອໃນລະອຽດຢ່າງແທ້ຈິງ ເພື່ອຊອກຊ່ອງທາງແກ້ໄຂໃຫ້ສອດຄ່ອງ ແລະ ທັນສະພາບການ.

6. ດ້ານມະຫາພາກ: ມອບໃຫ້ຫ້ອງການທະນາຄານແຫ່ງ ສປປ ລາວ ເປັນເຈົ້າການຄົ້ນຄວ້າວຽກງານທີ່ຕິດພັນກັບຄຳສັ່ງຂອງນາຍົກລັດຖະມົນຕີ ກ່ຽວກັບການປັບປຸງບັນດາລະບຽບ ແລະ ກົນໄກອຳນວຍຄວາມສະດວກໃນການດຳເນີນທຸລະກິດຢູ່ ສປປ ລາວ ເຊິ່ງຕິດພັນກັບຂະແໜງການທະນາຄານ.

7. ມອບໃຫ້ຄະນະຮັບຜິດຊອບຄົ້ນຄວ້າກົດໝາຍທະນາຄານແຫ່ງ ສປປ ລາວ ເອົາໃຈໃສ່ປັບປຸງກົດໝາຍສະບັບດັ່ງກ່າວກັບກະຊວງຍຸຕິທຳໃຫ້ລະອຽດ ແລ້ວສົ່ງໃຫ້ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີກ່ອນຈະນຳເຂົ້າຜ່ານກອງປະຊຸມສະພາແຫ່ງຊາດ.

ກອງປະຊຸມໄດ້ປິດລົງໃນເວລາ 11:25 ໂມງ ຂອງພາກເຊົ້າວັນດຽວກັນ

| ປະທານກອງປະຊຸມ | ຜູ້ບັນທຶກກອງປະຊຸມ |
|---|---|
| ດຣ ສົມພາວ ໄຟສິດ | ພອນສະໄໝ ພັນໄຊ |